ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອົງການປົກປ້ອງ-ນຳໃຊ້ກົດໝາຍ ເພີ່ມການຕ້ານການຟອກເງິນ



ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ທະນາຄານແຫ່ງ ສປປ ລາວ ກໍ່ຄືຄະນະສະເພາະກິດຮັບຜິດຊອບການປະເມີນວຽກງານການຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ຄັ້ງທີ 2 (2020-2021) ໄດ້ຈັດການເຜີຍແຜ່ເຊື່ອມຊຶມວຽກງານການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນວັນທີ **18** ກຸມພາ 2021 ທີ່ສະຖາບັນການທະນາຄານ ໂດຍການໃຫ້ກຽດເປັນປະທານຮ່ວມຂອງທ່ານ ຄຳພາ ແສງດາລາ ປະທານສານປະຊາຊົນສູງສຸດ ໂດຍມີເຈົ້າໜ້າທີ່ຈາກພາກສ່ວນອົງການສືບສວນ-ສອບສວນໃນນີ້ມີເຈົ້າທີ່ຕຳຫຼວດ, ທະຫານ, ເຈົ້າໜ້າທີ່ກວດກາປ່າໄມ້, ເຈົ້າໜ້າທີ່ພາສີ, ເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນນະຄອນຫຼວງວຽງຈັນ ແລະ ຄະນະອະນຸກຳມະການຮັບຜິດຊອບໃນການກະກຽມການປະເມີນວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ເຂົ້າຮ່ວມ.

ທ່ານ ຈິນດາໄມ ວິໄລທົງສ໌ ຮອງຫົວໜ້າ ສຕຟງ ໄດ້ນຳສະເໜີວຽກງານດັ່ງກ່າວ ຊຶ່ງເປັນການເປີດກວ້າງຄວາມຮັບຮູ້ກ່ຽວກັບວຽກງານຕ້ານການຟອກເງິນຕາມແຜນການຈັດຕັ້ງປະຕິບັດຂອງຄະນະສະເພາະກິດແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ບັນດານິຕິກຳຕ່າງໆທີ່ຕິດພັນ ໂດຍສະເພາະຄຳສັ່ງແນະນຳວ່າດ້ວຍການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍແນໃສ່ສ້າງຄວາມຮັບຮູ້ໃຫ້ກັບພາກສ່ວນອົງການສືບສວນ-ສອບສວນ ແລະ ເຈົ້າໜ້າທີ່ກ່ຽວຂ້ອງເຂົ້າໃຈຕໍ່ກັບຜົນການປະເມີນຄວາມສ່ຽງແຫ່ງຊາດ ແລະ ແຜນການຈັດຕັ້ງປະຕິບັດແກ້ໄຂໃນຕໍ່ໜ້າ ໂດຍລົງເລິກສະເພາະໜ້າວຽກທີ່ຕິດພັນເປັນຕົ້ນພັນທະຂອງເຈົ້າໜ້າທີ່ຕໍ່ວຽກງານດັ່ງກ່າວ, ການສືບສວນ-ສອບສວນຄະດີຟອກເງິນ ຄຽງຄູ່ກັບຄະດີສະຖານການກະທຳຜິດທາງອາຍາ, ບັນດາໄພຂົ່ມຂູ່ທີ່ເປັນຜົນມາຈາກການການເມີນຄວາມສ່ຽງທີ່ຕ້ອງເອົາໃຈໃສ່, ໃຫ້ກັບເຈົ້າໜ້າທີ່ເພື່ອຮັບຮູ້-ເຂົ້າໃຈຢ່າງລຶກເຊິ່ງ ແລະ ສາມາດນຳໄປຜັນຂະຫຍາຍເຂົ້າໃນໜ້າທີ່ຮັບຜິດຊອບຂອງຕົນໄດ້ຢ່າງມີປະສິດທິຜົນ, ພ້ອມທັງເປັນການກະກຽມຄວາມພ້ອມໃນການປະເມີນລະດັບຊາດວຽກງານຕ້ານການຟອກເງິນ ຄັ້ງທີ 2 (2020-2021).

ຄະນະຮັບຜິດຊອບ ຍັງໄດ້ນຳສະເໜີພາບລວມການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ບັນດານິຕິກຳຕ່າງໆທີ່ຕິດພັນເປັນຕົ້ນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນໃນ ສປປ ລາວ ໃນໄລຍະຜ່ານມາ, ສິດ ແລະ ໜ້າທີ່ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ, ການຈັດຕັ້ງປະຕິບັດຂອງອົງການສືບສວນ-ສອບສວນ ແລະ ອົງການຕຸລາການໂດຍສະເພາະການດຳເນີນຄະດີສະຖານການຟອກເງິນຄຽງຄູ່ກັບການດຳເນີນຄະດີສະຖານຄວາມຜິດທາງອາຍາຕ່າງໆ ກໍ່ຄືການປະຕິບັດຕາມຄຳສັ່ງແນະນຳຂອງປະທານ ຄຕຟງ ວ່າດ້ວຍການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍເພື່ອໃຫ້ສາມາດມີສະຖິຕິຄະດີຟອກເງິນສົມຄູ່ກັບຄະດີການກະທຳຜິດຕົ້ນທີ່ເປັນການຟອກເງິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍພ້ອມທັງເປັນການກະກຽມໃຫ້ແກ່ການປະເມີນຜົນຮອບດ້ານໃນປີ 2020-2021 ຂອງ ສປປ ລາວ ກ່ຽວກັບວຽກງານຕ້ານການຟອກເງິນ.

ການຟອກເງິນແມ່ນການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງຂອງເງິນ ຫຼື ຊັບສິນອື່ນທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂດຍທີ່ຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນມາຈາກການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ຊຸກເຊື່ອງຄຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງຂອງຊັບສິນ ເພື່ອເຮັດໃຫ້ເງິນ ຫຼື ຊັບສິນດັ່ງກ່າວຖືກຕ້ອງຕາມກົດໝາຍ ແລະ ການກະທຳທີ່ເປັນການຟອກເງິນແມ່ນການປ່ຽນຮູບ, ການໂອນເງິນ ຫຼື ຊັບສິນອື່ນໂດຍມີຈຸດປະສົງປົກປິດ ຫຼື ເຊື່ອງອຳພົນຈາກການກະທຳຜິດຕົ້ນ, ໃຫ້ການຊ່ວຍເຫຼືອຜູ້ກະທຳຜິດຕົ້ນເພື່ອຫຼົບຫຼີກຈາກຜົນສະທ້ອນທາງດ້ານກົດໝາຍ; ໄພຂົ່ມຂູ່ດ້ານການຟອກເງິນທີ່ເປັນບູລິມະສິດມີ 7 ລາຍການຈາກການກະທຳຜິດຕົ້ນຈາກ 29 ລາຍການໃນນີ້ມີ: ການຜະລິດ ແລະຄ້າຂາຍຢາເສບຕິດ, ການປອມແປງແຊັກການນຳໃຊ້ແຊັກ ຫຼື ພັນທະບັດອື່ນໂດຍບໍ່ຖືກຕ້ອງຕາມກົດໝາຍ, ອາຊະຍາກຳສິ່ງແວດລ້ອມ, ການລັກຊັບພົນລະເມືອງ, ການປອມແປງເງິນ ຫຼື ການໃຊ້ເງິນປອມ, ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ ແລະການສໍ້ໂກງຊັບພົນລະເມືອງ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**